ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 029 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 30.01.2015.

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ພາສີ ( ສະບັບປັບປຸງບາງມາດຕາ )

---

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 016/ສພຊ ລົງວັນທີ 24 ທັນວາ 2014;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 01/ຄປຈ ລົງວັນທີ 22 ມັງກອນ 2015.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

ມາດຕາ 1. ປະກາດໃຊ້ກົດໝາຍວ່າດ້ວຍ ພາສີ ( ສະບັບປັບປຸງບາດມາດຕາ )

ມາດຕາ 3. ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ

ເລກທີ 016 /ລພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ພາສີ

## (ສະບັບປັບປຸງບາງມາດຕາ)

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ພາສີ (ສະບັບປັບປຸງບາງມາດຕາ) ໃນວາລະກອງປະຊຸມຕອນເຊົ້າ ຂອງວັນທີ 24 ທັນວາ 2014

### ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1</u> ຮັບຮອງເອົາກົດໝາຍວ່າດ້ວຍ ພາສີ (ສະບັບປັບປຸງບາງມາດຕາ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 24 ທັນວາ 2014

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------------

ສະພາແຫ່ງຊາດ
ເລກທີ 57 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 24 ທັນວາ 2014

# ກົດໝາຍວ່າດ້ວຍ ພາສີ
# (ສະບັບປັບປຸງບາງມາດຕາ)

ກົດໝາຍວ່າດ້ວຍ ພາສີ (ສະບັບປັບປຸງ) ໄດ້ຖືກຮັບຮອງເອົາຈາກກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VII ແລະ ໄດ້ຮັບການປະກາດໃຊ້ ຕາມລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 057/ປປທ ລົງວັນທີ 16 ມັງກອນ 2012;

ເພື່ອໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການເກັບລາຍຮັບໃຫ້ໄດ້ຕາມແຜນການ ຈຶ່ງໄດ້ປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ພາສີ ດັ່ງນີ້:

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

1. **ລັດຖະການພາສີ** ໝາຍເຖິງ ກົມພາສີ, ດ່ານພາສີຊາຍແດນ ແລະ ການຈັດຕັ້ງອື່ນ ຂອງພາສີ ຊຶ່ງຂຶ້ນກັບກະຊວງການເງິນ ມີຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບພາສີ ຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ;
2. **ເຈົ້າໜ້າທີ່ພາສີ** ໝາຍເຖິງ ພະນັກງານພາສີ ທີ່ຖືກແຕ່ງຕັ້ງໃຫ້ປະຈຳການ ຢູ່ລັດຖະການພາສີ ແຕ່ລະຂັ້ນ, ເຮັດໜ້າທີ່ຈັດເກັບພາສີ, ກວດກາ ແລະ ສືບສວນ-ສອບສວນຄະດີທາງພາສີ ຕາມກົດໝາຍ, ລະບຽບການກ່ຽວກັບພາສີ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ;
3. **ພັນທະອື່ນ ໝາຍເຖິງ** ຄ່າທຳນຽມ ແລະ ຄ່າບໍລິການ.

**ມາດຕາ 69 (ປັບປຸງ) ຄະນະກຳມະການແກ້ໄຂຄຳສະເໜີ**

**ຄະນະກຳມະການແກ້ໄຂຄຳສະເໜີຖືກແຕ່ງຕັ້ງ ໂດຍລັດຖະມົນຕີວ່າການກະຊວງການເງິນ ຊຶ່ງມີສອງຂັ້ນ ດັ່ງນີ້:**

1. ຄະນະກຳມະການແກ້ໄຂຄຳສະເໜີປະຈຳດ່ານພາສີສາກົນ ຊຶ່ງປະກອບດ້ວຍ ຫົວໜ້າດ່ານພາສີສາກົນ ເປັນປະທານ, ພະນັກງານຈາກພະແນກການເງິນແຂວງ, ນະຄອນ, ຂະແໜງການທີ່ກ່ຽວຂ້ອງ ແລະ/ຫຼື ຜູ້ຊ່ຽວຊານດ້ານພາສີ ບ່ອນດ່ານພາສີສາກົນ ຕັ້ງຢູ່ ເປັນຄະນະ;
2. ຄະນະກຳມະການແກ້ໄຂຄຳສະເໜີ ຂັ້ນສູນກາງ ຊຶ່ງປະກອບດ້ວຍ ຫົວໜ້າກົມພາສີ ເປັນປະທານ, ພະນັກງານຈາກກົມອື່ນຂອງກະຊວງການເງິນ, ກະຊວງທີ່ກ່ຽວຂ້ອງ ແລະ/ຫຼື ຜູ້ຊ່ຽວຊານດ້ານພາສີ ເປັນຄະນະ.

ມາດຕາ 70 (ປັບປຸງ) ຂັ້ນຕອນການແກ້ໄຂຄຳສະເໜີ

**ຂັ້ນຕອນການແກ້ໄຂຄຳສະເໜີກ່ຽວກັບມູນຄ່າແຈ້ງພາສີ, ລະຫັດສິນຄ້າ ແລະ ແຫຼ່ງກຳເນີດສິນຄ້າ, ເຄື່ອງຂອງ ໃຫ້ປະຕິບັດ ດັ່ງນີ້:**

1. ພາຍຫຼັງໄດ້ຮັບຄຳສະເໜີແລ້ວ ຄະນະກຳມະການແກ້ໄຂຄຳສະເໜີປະຈຳດ່ານພາສີສາກົນ ຕ້ອງດຳເນີນການແກ້ໄຂ ແລະ ແຈ້ງຄຳຕົກລົງໃຫ້ຜູ້ສະເໜີ ພາຍໃນກຳນົດເວລາ ສາມສິບວັນ;

2. ໃນກໍລະນີ ທີ່ບໍ່ພໍໃຈຕໍ່ຄຳຕົກລົງ ຂອງຄະນະກຳມະການແກ້ໄຂຄຳສະເໜີ ປະຈຳດ່ານພາສີສາກົນນັ້ນ ຜູ້ສະເໜີມີສິດຍື່ນຄຳສະເໜີ ຕໍ່ຄະນະກຳມະການແກ້ໄຂຄຳສະເໜີຂັ້ນສູນກາງ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຕົກລົງດັ່ງກ່າວເປັນຕົ້ນໄປ;

3. ໃນກໍລະນີທີ່ຍັງບໍ່ພໍໃຈຕໍ່ຄຳຕົກລົງຂອງຄະນະກຳມະການແກ້ໄຂຄຳສະເໜີຂັ້ນສູນກາງນັ້ນຜູ້ສະເໜີກໍມີສິດຍື່ນຄຳຮ້ອງຟ້ອງຕໍ່ສານປະຊາຊົນ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນ ໄດ້ຮັບຄຳຕົກລົງດັ່ງກ່າວເປັນຕົ້ນໄປ. ຄຳຕັດສິນຂອງສານປະຊາຊົນນັ້ນ ໃຫ້ຖືວ່າເປັນທີ່ສິ້ນສຸດ ແລະ ໃຊ້ໄດ້ຢ່າງເດັດຂາດ.

ມາດຕາ 74 (ປັບປຸງ) ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງລັດຖະການພາສີ

**ໂຄງປະກອບການຈັດຕັ້ງຂອງລັດຖະການພາສີ ມີ ດັ່ງນີ້:**

1. **ກົມພາສີ ຊຶ່ງປະກອບດ້ວຍ:**
   - ພະແນກ;
   - ໜ່ວຍງານ.
2. **ດ່ານພາສີຊາຍແດນ ຊຶ່ງປະກອບດ້ວຍ:**
   - ດ່ານພາສີສາກົນ;
   - ດ່ານພາສີທ້ອງຖິ່ນ;
   - ດ່ານພາສີປະເພນີ.
3. **ການຈັດຕັ້ງອື່ນຂອງພາສີ (ໃນກໍລະນີມີການສ້າງຕັ້ງ).**

**ໂຄງປະກອບບຸກຄະລາກອນ ຂອງລັດຖະການພາສີ ມີ ດັ່ງນີ້:**

1. **ກົມພາສີ ຊຶ່ງປະກອບດ້ວຍ:**
   - ຫົວໜ້າ ແລະ ຮອງຫົວໜ້າ ກົມ;
   - ຫົວໜ້າ ແລະ ຮອງຫົວໜ້າ ພະແນກ;
   - ຫົວໜ້າ ແລະ ຮອງຫົວໜ້າ ໜ່ວຍງານ;
   - ພະນັກງານ ແລະ ເຈົ້າໜ້າທີ່ພາສີ;
   - ພະນັກງານຊ່ວຍວຽກຈຳນວນໜຶ່ງ.

2. **ດ່ານພາສີຊາຍແດນ ຊຶ່ງປະກອບດ້ວຍ:**
   - ຫົວໜ້າ ແລະ ຮອງຫົວໜ້າ ດ່ານພາສີສາກົນ;
   - ຫົວໜ້າ ແລະ ຮອງຫົວໜ້າ ຈຸງານຂອງດ່ານພາສີສາກົນ;
   - ຫົວໜ້າ ແລະ ຮອງຫົວໜ້າ ດ່ານພາສີທ້ອງຖິ່ນ, ດ່ານພາສີປະເພນີ;
   - ພະນັກງານ ແລະ ເຈົ້າໜ້າທີ່ພາສີ;

– ພະນັກງານຊ່ວຍວຽກຈຳນວນໜຶ່ງ.

ສຳລັບເງື່ອນໄຂ ແລະ ມາດຕະຖານຂອງແຕ່ລະຕຳແໜ່ງງານ, ການແຕ່ງຕັ້ງ, ການຍົກຍ້າຍ ຫຼື ປົດຕຳແໜ່ງບຸກຄະລາກອນຂອງລັດຖະການພາສີ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 75 (ປັບປຸງ) ສິດ ແລະ ໜ້າທີ່ ຂອງລັດຖະການພາສີ ( ຕາມມາດຕາ 111/1 ແລະ 111/2)**
**ມາດຕາ 76 (ປັບປຸງ) ໂຄງປະກອບບຸກຄະລາກອນ (ຕາມມາດຕາ 74)**

**ມາດຕາ 79 ຂໍ້ 5 (ປັບປຸງ)** ນຳໃຊ້ອາວຸດ, ເຄື່ອງມື ແລະ ອຸປະກອນ ວິຊາສະເພາະຕ່າງໆ ໃນການປະຕິບັດໜ້າທີ່ຂອງຕົນໃນກໍລະນີຈຳເປັນ;

**ມາດຕາ 110 (ປັບປຸງ) ອົງການຄຸ້ມຄອງວຽກງານພາສີ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານພາສີຢ່າງລວມສູນຕາມສາຍຕັ້ງ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການເງິນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານພາສີ ປະກອບດ້ວຍ:

1. ກະຊວງການເງິນ;
2. ກົມພາສີ;
3. ດ່ານພາສີຊາຍແດນ.

**ມາດຕາ 111 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

**ໃນການຄຸ້ມຄອງວຽກງານພາສີ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານພາສີ ເພື່ອສະເໜີລັດຖະບານພິຈາລະນາ;
2. ສ້າງແຜນການ, ອອກລະບຽບການ, ຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບວຽກງານພາສີ;
3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານພາສີ ໃນຂອບເຂດທົ່ວປະເທດ;
4. ຊີ້ນຳ, ຊຸກຍູ້, ຕິດຕາມ ກວດກາ ການປະຕິບັດກົດໝາຍ, ນິຕິກຳອື່ນ ແລະ ການປະຕິບັດໜ້າທີ່ຂອງລັດຖະການພາສີ ໃນຂອບເຂດທົ່ວປະເທດ;
5. ບຳລຸງສ້າງ, ຝຶກອົບຮົມ ແລະ ຍົກລະດັບ ພະນັກງານ ແລະ ເຈົ້າໜ້າທີ່ພາສີ ຕາມລະບຽບການ;
6. ຕົກລົງແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ບຸກຄະລາກອນ ຂອງລັດຖະການພາສີ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ພາຍຫຼັງໄດ້ຮັບການເຫັນດີ ຈາກອົງການປົກຄອງທ້ອງຖິ່ນ;
7. ປະສານສົມທົບກັບບັນດາຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານພາສີ;
8. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານພາສີ;

9. ສະຫຼຸບ ແລະ ລາຍງານໃຫ້ລັດຖະບານ ແລະ ສະພາແຫ່ງຊາດ ກ່ຽວກັບວຽກງານພາສີ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 111/1 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກົມພາສີ**

**ໃນການຄຸ້ມຄອງວຽກງານພາສີ ກົມພາສີ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ເປັນເສນາທິການໃຫ້ກະຊວງການເງິນ ໃນການຄົ້ນຄວ້າແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານພາສີ;

2. ຄົ້ນຄວ້າອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການທາງດ້ານວິຊາການ ໃນການຈັດຕັ້ງປະຕິບັດວຽກງານພາສີ;

3. ຈັດຕັ້ງຜັນຂະຫຍາຍ, ໂຄສະນາ ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານພາສີ ຕາມຄວາມຮັບຜິດຊອບຂອງຕົນ;

4. ຄົ້ນຄວ້າ ແລະ ສະເໜີການສ້າງຕັ້ງ ລະບົບສາງ ຕໍ່ກະຊວງການເງິນ ເພື່ອພິຈາລະນາ;

5. ຊີ້ນຳ, ນຳພາ, ຊຸກຍູ້, ຕິດຕາມ ກວດກາ ກິຈັກການຈັດຕັ້ງ, ວິຊາສະເພາະ ແລະ ການເຄື່ອນໄຫວວຽກງານ ຂອງລັດຖະການພາສີ ໃນຂອບເຂດທົ່ວປະເທດ ຕາມກົດໝາຍ ແລະ ລະບຽບການ;

6. ເກັບກຳ ແລະ ສະໜອງຂໍ້ມູນສະຖິຕິ ກ່ຽວກັບການສົ່ງອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງ;

7. ສ້າງແຜນການບຳລຸງສ້າງ, ຈັດວາງ, ສັບຊ້ອນ, ສະເໜີແຕ່ງຕັ້ງ, ເລື່ອນຊັ້ນ, ເລື່ອນຂັ້ນ, ຍົກຍ້າຍ ຫຼື ປົດຕຳແໜ່ງ ພະນັກງານ ແລະ ເຈົ້າໜ້າທີ່ພາສີ ຕາມລະບຽບການ ບົນພື້ນຖານການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ;

8. ຄົ້ນຄວ້າ, ແກ້ໄຂຄຳສະເໜີຂອງຜູ້ແຈ້ງພາສີ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມກົດໝາຍ ແລະ ລະບຽບການ;

9. ດຳເນີນ ການກວດສອບຄືນ ພາຍຫຼັງການແຈ້ງພາສີ, ການກວດກາ ແລະ ສະກັດກັ້ນ ການລັກລອບ, ການຫຼົບຫຼີກພາສີ ແລະ ພິຈາລະນາ ແກ້ໄຂຄະດີທາງພາສີ;

10. ສືບສວນ-ສອບສວນຄະດີທາງພາສີ ແລະ ປະກອບສຳນວນຄະດີທາງພາສີ ສົ່ງໃຫ້ອົງການໄອຍະການປະຊາຊົນ ເພື່ອສັ່ງຟ້ອງຂຶ້ນສານຕາມກົດໝາຍ;

11. ປະສານສົມທົບກັບຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານພາສີ;

12. ປະຕິບັດຂໍ້ຕົກລົງ, ສັນຍາສາກົນ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ, ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານພາສີ ຕາມການມອບໝາຍ;

13. ສະຫຼຸບ ແລະ ລາຍງານຜົນການເຄື່ອນໄຫວວຽກງານພາສີ ຕໍ່ກະຊວງການເງິນ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 111/2 (ໃໝ່) ສິດ ແລະ ໜ້າທີ່ ຂອງດ່ານພາສີຊາຍແດນ**

**ໃນການຄຸ້ມຄອງວຽກງານພາສີ ດ່ານພາສີຊາຍແດນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:**

1. ເປັນເສນາທິການໃຫ້ກົມພາສີ, ໂຄສະນາ ເຜີຍແຜ່ ແລະ ຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານພາສີ ຢ່າງເຂັ້ມງວດ;

2. ສ້າງ ແລະ ປະຕິບັດ ແຜນການເກັບລາຍຮັບພາສີ, ຄ່າທຳນຽມ ແລະ ຄ່າບໍລິການ ຂອງສົກປີງົບປະມານຕາມຄາດໝາຍ;

3. ຈັດເກັບພາສີ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມກົດໝາຍ ແລະ ລະບຽບການ ເຂົ້າງົບປະມານແຫ່ງລັດ ໃຫ້ຖືກຕ້ອງ, ຄົບຖ້ວນ, ຊັດເຈນ, ໂປ່ງໃສ ແລະ ທັນກຳນົດເວລາ;

4. ຊີ້ນຳ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດໜ້າທີ່ ແລະ ການເຄື່ອນໄຫວວຽກງານວິຊາສະເພາະ ຂອງເຈົ້າໜ້າທີ່ພາສີປະຈຳດ່ານ ທີ່ຂຶ້ນກັບຕົນ;

5. ບໍລິການ, ຕິດຕາມ ແລະ ອຳນວຍຄວາມສະດວກ ໃນການກວດກາ ສິນຄ້າ, ເຄື່ອງຂອງ ທີ່ສົ່ງອອກ-ນຳເຂົ້າ ລວມທັງການຜ່ານແດນ ຢ່າງວ່ອງໄວ ແລະ ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

6. ຄົ້ນຄວ້າ, ແກ້ໄຂຄຳສະເໜີ ຂອງຜູ້ແຈ້ງພາສີ;

7. ສະກັດກັ້ນທຸກການລະເມີດກົດໝາຍ, ລະບຽບການກ່ຽວກັບວຽກງານພາສີ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ, ດຳເນີນຄະດີຕໍ່ຜູ້ລະເມີດ ຕາມພາລະບົດບາດຂອງຕົນ;

8. ຕິດຕາມ, ປະເມີນຜົນການເຄື່ອນໄຫວ ຂອງຜູ້ແຈ້ງພາສີ ທີ່ປະຕິບັດກົດໝາຍ, ລະບຽບການກ່ຽວກັບວຽກງານພາສີ;

9. ເກັບກຳ, ສັງລວມ ແລະ ສະໜອງຂໍ້ມູນສະຖິຕິ ກ່ຽວກັບການສົ່ງອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງ;

10. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງໃນການປະຕິບັດໜ້າທີ່ຂອງຕົນ;

11. ສະຫຼຸບ ແລະ ລາຍງານຜົນການເຄື່ອນໄຫວວຽກງານພາສີ ຕໍ່ຂັ້ນເທິງຂອງຕົນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງກົມພາສີ.

**ມາດຕາ 111/3 (ໃໝ່) ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ຊຸກຍູ້ການຈັດເກັບລາຍຮັບໃຫ້ໄດ້ຕາມແຜນການ ແລະ ຄຸ້ມຄອງລາຍຈ່າຍ ຕາມລະບຽບການການເງິນ, ປະສານສົມທົບກັບລັດຖະການພາສີ ທີ່ກ່ຽວຂ້ອງກ່ຽວກັບການຄຸ້ມຄອງວຽກງານພາສີ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ນອກຈາກນີ້ ອົງການປົກຄອງທ້ອງຖິ່ນ ຍັງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຊີ້ນຳ, ນຳພາດ້ານການເມືອງ, ແນວຄິດ ຕໍ່ເຈົ້າໜ້າທີ່ພາສີ ທີ່ປະຈຳການ ຢູ່ດ່ານພາສີຊາຍແດນໃນຂອບເຂດທ້ອງຖິ່ນຂອງຕົນ ເພື່ອຍົກສູງສະຕິຄວາມເປັນເຈົ້າການໃນການປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານພາສີ;

2. ອຳນວຍຄວາມສະດວກ ແລະ ມີສ່ວນຮ່ວມ ໃນການຈັດຕັ້ງໂຄສະນາ ເຜີຍແຜ່ ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານພາສີ ໃນທ້ອງຖິ່ນຂອງຕົນ ເພື່ອຮັບຮູ້, ເຂົ້າໃຈ ເປັນເອກະພາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ;

3. ຕິດຕາມ ກວດກາ, ຊຸກຍູ້ ແລະ ໃຫ້ການຮ່ວມມື ແກ່ລັດຖະການພາສີ ໃນການປະຕິບັດສິດ ແລະ ໜ້າທີ່ວຽກງານ;

4. ມີຄຳເຫັນໃຫ້ກະຊວງການເງິນ ໃນການຕົກລົງ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ, ຍ້ອງຍໍ ແລະ ລົງວິໄນ ບຸກຄະລາກອນ ຂອງລັດຖະການພາສີ ໃນທ້ອງຖິ່ນຂອງຕົນ;

**ມາດຕາ 114 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການກວດກາພາຍນອກ**

ອົງການກວດກາພາຍນອກ ມີ ສິດ ແລະ ໜ້າທີ່ ກວດກາການຈັດຕັ້ງປະຕິບັດໜ້າທີ່ ຂອງລັດຖະການພາສີ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານພາສີ ມີປະສິດທິຜົນ, ມີຄວາມໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 115/1 (ໃໝ່) ການກວດກາເຈົ້າໜ້າທີ່ພາສີ**

ໃນກໍລະນີ ທີ່ມີການສົງໄສ ຫຼື ມີຄຳຮ້ອງທຸກ ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ວ່າເຈົ້າໜ້າທີ່ພາສີ ມີພຶດຕິກຳຮັ່ງມີຜິດປົກກະຕິ, ມີການກະທຳທີ່ເປັນການສໍ້ລາດບັງຫຼວງ ນັ້ນ ອົງການກວດກາວຽກງານພາສີ ມີສິດກວດກາ ຕາມຮູບການທີ່ໄດ້ກຳນົດໄວ້ໃນມາດຕາ 115 ຂອງກົດໝາຍສະບັບນີ້.

**ມາດຕາ 119 (ປັບປຸງ) ມາດຕະການຕໍ່ບຸກຄະລາກອນ ຂອງລັດຖະການພາສີ**

ບຸກຄະລາກອນ ຂອງລັດຖະການພາສີ ເປັນຕົ້ນ ເຈົ້າໜ້າທີ່ພາສີ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ສຶກສາອົບຮົມ, ກ່າວເຕືອນ ແລະ ບັນທຶກເຂົ້າໃນຊີວະປະຫວັດຂອງຜູ້ກ່ຽວ ເມື່ອມີການກົດໜ່ວງຖ່ວງດຶງ, ຂາດຄວາມຮັບຜິດຊອບ ຕໍ່ວຽກງານທີ່ຕົນໄດ້ຮັບມອບໝາຍ ຫຼື ມີການລະເມີດອື່ນ ຊຶ່ງບໍ່ສ້າງຄວາມເສັຍຫາຍ ໃຫ້ແກ່ລາຍຮັບພາສີ, ຄ່າທຳນຽມ ແລະ ຄ່າບໍລິການ;

2. ລົງວິໄນ ແລະ ໃຊ້ແທນຄ່າເສັຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ ເມື່ອມີການລະເມີດກົດໝາຍ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແຕ່ສ້າງຄວາມເສັຍຫາຍຕໍ່າກວ່າ ຫ້າ ລ້ານກີບ.

ໃນກໍລະນີ ມີການກະທຳຜິດໂດຍເຈດຕະນາ ຊຶ່ງສ້າງຄວາມເສັຍຫາຍແຕ່ ຫ້າ ລ້ານກີບ ຂຶ້ນໄປ ຕ້ອງໃຊ້ແທນຄ່າເສັຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ ແລະ ຈະຖືກດຳເນີນຄະດີອາຍາ ແລະ/ຫຼື ໃຫ້ອອກຈາກລັດຖະກອນ ໂດຍບໍ່ໄດ້ຮັບນະໂຍບາຍ ໃດໆ;

3. ດຳເນີນການກວດກາ ຖ້າຫາກມີການຮ້ອງຟ້ອງຂອງປະຊາຊົນ ແລະ ດຳເນີນຄະດີຕາມກົດໝາຍ ເມື່ອມີການກະທຳທີ່ເປັນການສໍ້ລາດບັງຫຼວງ ແລະ ການລະເມີດຂໍ້ຫ້າມ ຊຶ່ງມີອົງປະກອບຂອງການກະທຳຜິດທາງອາຍາ.

**ມາດຕາ 122 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນບາງມາດຕາ ຂອງກົດໝາຍວ່າດ້ວຍ ພາສີ ສະບັບເລກທີ 04 /ສພຊ ລົງວັນທີ 20 ທັນວາ 2011.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້